ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ 1247

ຫ້ອງການ ເລກທີ_____/ຫອຄ.ກຫຄວ

ນະຄອນຫລວງວຽງຈັນ,ວັນທີ 04 ມິຖຸນາ 2017

# ແຈ້ງການ

ເຖິງ: - ອົງການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ;

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ
- ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ເທດສະບານ
- ປະຊາຊົນບັນດາເຜົ່າ ແລະ ຜູ້ລົງທຶນ(ພາຍໃນ ແລະ ຕ່າງປະເທດ) ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ

ເລື່ອງ: ເປີດນຳໃຊ້ເວັບໄຊ້ ແລະ ເບີ WhatsApp ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເພື່ອເຮັດໃຫ້ການບໍລິການຂໍ້ມູນຂ່າວສານ ກ່ຽວກັບວຽກງານທະບຽນ ແລະຄຸ້ມຄອງວິສາຫະກິດຂອງຂະແໜງ ອຸດສາຫະກຳ ແລະ ການຄ້າ, ໃຫ້ໄດ້ຖືກເຜີຍແຜ່ອອກສູ່ສາທາລະນະຊົນຫລາຍຂຶ້ນ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ, ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງຊາບ ດັ່ງນີ້:

1. ເປີດນຳໃຊ້ເວັບໄຊ້ ຖານຂໍ້ມູນວິສາຫະກິດແຫ່ງຊາດ ທີ່ຂຶ້ນກັບກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ, ຊື່ເວັບໄຊ້ແມ່ນ: www.erm.gov.la ຊຶ່ງໄດ້ເປີດນຳໃຊ້ເລີ່ມແຕ່ວັນທີ 26 ພຶດສະພາ 2017, ໃນເວັບໄຊ້ປະກອບມີຂໍ້ມູນທີ່ກ່ຽວຂ້ອງກັບວຽກງານທະບຽນວິສາຫະກິດ ເຊັ່ນ: ກົດໝາຍ, ນິຕິກຳ, ແບບຟອມ, ຄ່າທຳນຽມ, ການຄົ້ນຫາວິສາຫະກິດ, ການລາຍງານສະຖິຕິ ແລະ ບ່ອນພົວພັນແຈ້ງຂຶ້ນທະບຽນວິສາຫະກິດ;
2. ເປີດນຳໃຊ້ເບີ WhatsApp: 85620 96638135 ຂອງກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອສະດວກໃນການຕິດຕໍ່ພົວພັນຂໍ້ມູນທີ່ກ່ຽວຂ້ອງ ກັບວຽກງານທະບຽນ ແລະ ຄຸ້ມຄອງວິສາຫະກິດ;
3. ຜູ້ທີ່ສົນໃຈໃນຂໍ້ 1 ແລະ2 ເທິງນີ້ ສາມາດໃຊ້ບໍລິການໄດ້ ໂດຍບໍ່ຈຳກັດ ວັນ ແລະ ເວລາ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳແລະການຄ້າ ຫ້ອງການ

ນ.ບານສະຕິ ເທບພະວົງ

Scanned by CamScanner